global witness

ວັນພະຫັດ 28 ສິງຫາ 2014

ທຸກທ່ານທີ່ນັບຖື,

ພວກເຮົາເຮັດໜັງສືນີ້ເພື່ອແຈ້ງໃຫ້ທ່ານຊາບກ່ຽວກັບການປະກາດຂອງກຸ່ມບໍລິສັດຢາງຫວຽດນາມ ສະບັບລົງວັນທີ 16 ກໍລະກົດ 2014, ເຊິ່ງພວກເຮົາເຊື່ອວ່າ ຈະມີຄວາມສຳຄັນຕໍ່ກັບວຽກງານຂອງທ່ານ.

Global Witness ໄດ້ມີການປຶກສາຫາລືກັບກຸ່ມບໍລິສັດຢາງຫວຽດນາມ (VRG) ຕັ້ງແຕ່ໄດ້ມີການຕີພິມເຜີຍແຜ່ບົດລາຍງານຂອພວກເຮົາກ່ຽວກັບສະພາບການຂອງຢາງຢູ່ໃນເດືອນພຶດສະພາ 2013. ພວກເຮົາໄດ້ມີການປຶກສາຫາລືວ່າ ບໍລິສັດ ແລະບັນດາຫຸ້ນສ່ວນສາຂາຂອງບໍລິສັດຈະສາມາດປັບປຸງສະຖານະການໃຫ້ກັບຊຸມຊົນທ້ອງຖິ່ນທີ່ອາໄສຢູ່ໃນ ຫຼືໃກ້ກັບສວນຢາງຊາວເອັດແຫ່ງໃນກຳປູເຈຍ ແລະຫວຽດນາມໄດ້ແນວໃດ.

**ສິ່ງທີ່ໄດ້ນຳສະເໜີແມ່ນຫຍັງ?**

ໃນການປະກາດວັນທີ 16 ກໍລະກົດ 2014 (ຮູ້ໃນນາມທາງການວ່າເປັນຄຳສັ່ງ 314, ເບິ່ງເອກະສານຄັດຕິດມາກັບໜັງສືສະບັບນີ້ທີ່ເປັນພາສາອັງກິດ, ລາວ ແລະຂະແມ) ຈາກສຳນັກງານໃຫຍ່ຂອງ VRG ຢູ່ໃນເມືອງໂຮຈິມິນ, ໄດ້ສ້າງຕັ້ງໃຫ້ມີການຕຳນິຕິຊົມ, ການຮ້ອງທຸກ ແລະກົນໄກການເປີດເຜີຍຂໍ້ມູນ. ກົນໄກນີ້ເປີດໃຫ້ມີຊ່ອງທາງການສື່ສານໂດຍກົງລະຫວ່າງຊຸມຊົນທີ່ໄດ້ຮັບຜົນກະທົບ (ແລະອົງການຈັດຕັ້ງທາງສັງຄົມທີ່ໃຫ້ການສະໜັບສະໜູນເຂົາເຈົ້າ) ແລະບໍລິສັດ ເພື່ອໃຫ້ເຫັນດີ ແລະເຮັດວຽກໄປສູ່ການແກ້ໄຂໃນຮູບແບບໃດໜຶ່ງ. ລາຍຊື່ຂອງສວນຢາງທັງໝົດທີ່ຄຳສັ່ງນີ້ກ່າວເຖິງແມ່ນມີຢູ່ໃນເອກະສານຊ້ອນທ້າຍຂອງເອກະສານຄັດຕິດເຫຼົ່ານີ້.

ກົນໄກນີ້ແມ່ນທາງ Global Witness ແນະນຳໃຫ້ກັບທາງ  VRG. ມັນມຸ່ງໝາຍທີ່ຈະປ່ຽນແປງສະຖານະການປະຈຸບັນ - ນັ້ນກໍ່ຄືວ່າ ເມື່ອຊຸມຊົນສົ່ງຂໍ້ຮ້ອງຮຽນໃຫ້ກັບບໍລິສັດ VRG ກ່ຽວກັບສວນປູກຢາງທີ່ໄປກວາມເອົາທີ່ດິນຂອງເຂົາເຈົ້າ, ການບຸກລຸກອະນາໄມພື້ນທີ່ປ່າໄມ້ ຫຼືຄວາມຮັບຜິດຊອບຕໍ່ການລະເມີດອື່ນໆ, ເຊິ່ງບໍ່ຄ່ອຍມີການຕອບຮັບເປັນທາງການຈາກບໍລິສັດ.

ຄຳສັ່ງສະບັບເຕັມແມ່ນຄັດຕິດມານຳ ແຕ່ມັນກໍ່ເຫັນວ່າຈະມີປະໂຫຍດທີ່ຈະເນັ້ນໃຫ້ເຫັນເຖິງອົງປະກອບຕົ້ນຕໍຂອງກົນໄກດັ່ງຕໍ່ໄປນີ້:

- ມັນລວມມີການເນັ້ນໜັກກ່ຽວກັບການປະຕິບັດຕາມກົດໝາຍຂອງຊາດ. ມັນມີລາຍຊື່ຂອງກົດໝາຍສຳຄັນຢູ່ໃນກຳປູເຈຍ ແລະ ສປປ ລາວ ເຊິ່ງທຸກໂຄງການລົງທຶນຂອງ VRG ຕ້ອງປະຕິບັດຕາມ (ມາດຕາທີ 1)
- ກົນໄກແມ່ນສາມາດນຳໃຊ້ກັບສະມາຊິກທຸກບ່ອນຂອງ VRG ທີ່ມີສວນຢາງຂອງບໍລິສັດຢູ່ໃນກຳປູເຈຍ ແລະ ສປປ ລາວ (ມາດຕາທີ 1). ເບິ່ງເອກະສານຄັດຕິດທີ 1 ຂອງຄຳສັ່ງສຳລັບລາຍການສະບັບເຕັມ
- ຂໍ້ຮ້ອງຮຽນ ຫຼືການສອບຖາມແມ່ນສາມາດສົ່ງເປັນພາສາອັງກິດ, ຫວຽດນາມ, ລາວ ຫຼືຂະແມ ໂດຍສົ່ງໃຫ້ກັບຫ້ອງການປູກໄມ້ ຫຼືຫ້ອງການຂອງ VRG ປະຈຳປະເທດນັ້ນ (ມາດຕາ 2)
- ເມື່ອມີການສົ່ງໄປໃຫ້ແລ້ວ, ຫ້ອງການຜູ້ຕາງໜ້າຂອງ VRG ຫຼືຫ້ອງການບໍລິສັດທີ່ເປັນສະມາຊິກຈະອອກໃບຮັບໃຫ້ກັບບຸກຄົນ ຫຼືອົງການຈັດຕັ້ງ ໂດຍມີເລກທີອ້າງອີງສະເພາະ, ເຊິ່ງສາມາດໃຊ້ຕິດຕາມເບິ່ງຄວາມຄືບໜ້າຂອງການດຳເນີນການສະເໜີ (ມາດຕາ 3)
- ເຖິງແນວໃດກໍ່ຕາມ, VRG ຈະບໍ່ຕອບຄຳສະເໜີ ຫຼືຂໍ້ຮ້ອງຮຽນໃນກໍລະນີຕໍ່ໄປນີ້ (ມາດຕາ 4):
  - ຖ້າລັດຖະບານໃນປະເທດນັ້ນຫ້າມ VRG ຕອບ ຫຼືເປີດເຜີຍຂໍ້ມູນ
  - ອອກໃຫ້ເກີນກ່ວາສິດ ແລະ/ຫຼືຄວາມຮັບຜິດຊອບຂອງຜູ້ລົງທຶນຕ່າງປະເທດ (ຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍຂອງປະເທດ)
  - ໜັງສືທີ່ບໍ່ມີການລົງຊື່, ບໍ່ມີຂໍ້ມູນ ຫຼືທີ່ຢູ່ຂອງຜູ້ສົ່ງ
  - ສະເໜີຂໍຂໍ້ມູນທີ່ບໍ່ພົວພັນກັບໂຄງການສວນຢາງ
- VRG ຈະຕອບຄຳສະເໜີພາຍໃນ 30 ວັນ. ໃນກໍລະນີທີ່ການສະເໜີມີຄວາມສະຫຼັບຊັບຊ້ອນ, ຈະມີການແຈ້ງບອກຄວາມຄືບໜ້າກ່ອນ 30 ວັນ ເຊິ່ງຈະລວມເອົາກອບເວລາທີ່ຄາດການໄວ້ວ່າຈະໃຫ້ການຕອບເຕັມທີ່ໄດ້ເມື່ອໃດ (ມາດຕາ 6)
- ຖ້າ VRG ບໍ່ສາມາດຕອບໄດ້ດ້ວຍເຫດຜົນໃດກໍ່ຕາມ, ບໍລິສັດຈະຕອບຄືນ ເພື່ອອະທິບາຍວ່າຍ້ອນຫຍັງ (ມາດຕາ 6)
- ຫ້ອງການ VRG ຢູ່ໃນກຳປູເຈຍ ແລະ ສປປ ລາວ ຕ້ອງເປີດເຜີຍຂໍ້ມູນກ່ຽວກັບກົນໄກນີ້ເປັນພາສາທ້ອງຖິ່ນຂອງຕົນເອງໃຫ້ກັບສັງຄົມພາຍໃນວັນທີ 16 ສິງຫາ 2014 (ມາດຕາ 8)
- ຖ້າມີບັນຫາໃດໜຶ່ງກັບກົນໄກ, ຕ້ອງໄດ້ແຈ້ງໃຫ້ກັບ VRG. ບໍລິສັດມີຄຳໝັ້ນສັນຍາທີ່ຈະຕອບ ໂດຍການປັບປຸງກົນໄກບ່ອນທີ່ເປັນໄປໄດ້.

**ໃຜຈະຕິດຕາມກວດກາການຈັດຕັ້ງປະຕິບັດກົນໄກນີ້ໃຫ້ສຳເລັດຜົນ?**

ມີຈຸດປະສົງທີ່ເປັນໄປໄດ້ສີ່ຢ່າງ ເພື່ອຕິດຕາມການຈັດຕັ້ງປະຕິບັດກົນໄກນີ້ຄື:

ກ. ເພື່ອຮັບປະກັນໃຫ້ VRG ຈັດຕັ້ງປະຕິບັດຢ່າງເຕັມທີ;

ຂ. ສຳລັບ NGOs / CSOs / NPAs ຢູ່ໃນກຳປູເຈຍ ແລະ ສປປ ລາວ ແມ່ນໃຫ້ມີສ່ວນຮ່ວມຢ່າງຕັ້ງໜ້າໃນການໃຊ້ກົນໄກ ເພື່ອສະໜັບສະໜູນຊຸມຊົນທີ່ໄດ້ຮັບຜົນກະທົບ ໃນຂະນະທີ່ໃຫ້ການສ້າງຄວາມຮູ້ຄວາມສາມາດໃນການໃຊ້ກົນໄກການຮ້ອງຮຽນທີ່ບໍ່ກ່ຽວຂ້ອງທາງສານນຳ;

ຄ. ເພື່ອໃຫ້ຫຼັກຖານແກ່ Global Witness (ແລະພາກສ່ວນອື່ນໆ) ເພື່ອໃຫ້ສາມາດຮຽກຮ້ອງໃຫ້ VRG ດຳເນີນການທົບທວນເພີ່ມເຕີມ ແລະປັບປຸງແປງກົນໄກ ເພື່ອປັບປຸງມັນຢູ່ຕະຫຼອດເວລາ;

ງ. ເພື່ອທົດລອງກົນໄກການຮຽກຮ້ອງດັ່ງກ່າວ ເພື່ອປະເມີນວ່າຈະສາມາດນຳສະເໜີອັນນີ້ເປັນຮູບແບບທີ່ດີສຳລັບການດຳເນີນການຂອງບໍລິສັດອື່ນໆຢູ່ໃນກຳປູເຈຍ ແລະ ສປປ ລາວ (ແລະປະເທດອື່ນໆບ່ອນທີ່ບໍ່ມີການປົກຄອງດ້ວຍລັດແຫ່ງກົດໝາຍ).

## Global Witness ເຮັດຫຍັງ?

ເຖິງແນວໃດກໍ່ຕາມ, ພວກເຮົາຍັງບໍ່ໝັ້ນໃຈວ່າ VRG ຈະສາມາດຈັດຕັ້ງປະຕິບັດກົນໄກນີ້ໄດ້ໃນທົ່ວທຸກບ່ອນການລົງທຶນທັງໝົດຢູ່ໃນກຳປູເຈຍ ແລະລາວ. ດັ່ງນັ້ນ ພວກເຮົາດີໃຈຫຼາຍທີ່ບໍລິສັດເຫັນດີເຮັດວຽກຮ່ວມກັບ Global Witness ເປັນເວລາອີກສອງປີຂ້າງໜ້າ. ບົດບາດອັນທຳອິດຂອງພວກເຮົາແມ່ນຈະຕິດຕາມວ່າກົດໄກໄດ້ຮັບການຈັດຕັ້ງປະຕິບັດດີປານໃດ ແລະອັນທີສອງແມ່ນຈະທົບທວນຄືນ ເພື່ອປັບປຸງມັນ.

## ຂ້ອຍຈະເຂົ້າຮ່ວມໄດ້ແນວໃດ?

ພວກເຮົາຢາກຈະຂໍຄວາມຊ່ວຍເຫຼືອຂອງທ່ານ ເພື່ອຕິດຕາມວ່າ VRG ຕອບຕໍ່ຂໍ້ຊັກຖາມ ແລະຂໍ້ຮຽກຮ້ອງຜ່ານຂັ້ນຕອນຕໍ່ໄປນີ້ບໍຄື:

ກ) ຕິດຕາມເບິ່ງວ່າ ກົນໄກໄດ້ຮັບການປະກາດຕາມທີ່ທາງ VRG ໄດ້ຕົກລົງບໍ່

   ກ. ໄດ້ມີການຕີພິມເຜີຍແຜ່ລາຍລະອຽດຂອງກົນໄກໃນທ້ອງຖິ່ນຕາມທີ່ໄດ້ຕົກລົງກັນບໍ່?

   ຂ. ມີໃຫ້ເປັນພາສາຂະແມ ແລະ/ຫຼືພາສາລາວຕາມທີ່ໄດ້ຕົກລົງກັນບໍ?

- *ອົງການຈັດຕັ້ງ, ເຄືອຂ່າຍ ແລະ/ຫຼືຊຸມຊົນຂອງທ່ານທີ່ທ່ານເຮັດວຽກນຳສາມາດບອກພວກເຮົາກ່ຽວກັບປະສົບການເລື່ອງນີ້ຂອງທ່ານໄດ້ບໍ? ມີຂໍ້ມູນໃດບໍກ່ຽວກັບກົນໄກນີ້ທີ່ໄດ້ເຜີຍແຜ່ຢູ່ໃນລະດັບທ້ອງຖິ່ນ, ແລະຖ້າມີ ແມ່ນແນວໃດ?*

ຂ. ທົດສອບການເຮັດໜ້າທີ່ຂອງກົນໄກຢູ່ໃນພື້ນທີ່ດ້ວຍການສືບຖາມຕົວຈິງ ແລະຂໍ້ຮ້ອງຮຽນກ່ຽວຂ້ອງກັບການສະໜັບສະໜູນທີ່ດຳເນີນການຢູ່ໃນເປົ້າໝາຍສວນຢາງຂອງ VRG ຄື:

- *ອົງການຈັດຕັ້ງຂອງທ່ານ, ເຄືອຂ່າຍ ແລະ/ຫຼືຊຸມຊົນທ້ອງຖິ່ນສາມາດພະຍາຍາມໃຊ້ກົນໄກສຳລັບວຽກຂອງເຂົາເຈົ້າເອງ (ເພື່ອຖາມຄຳຖາມ, ສົ່ງຂໍ້ຮ້ອງຮຽນ, ຫຼືອື່ນໆ...) ໄດ້ບໍ?*
- *ການສະເໜີແຕ່ລະອັນທີ່ສົ່ງໃຫ້ກັບ VRG ຍັງສາມາດສົ່ງຕໍ່ໄປໃຫ້ທາງ Global Witness ຫຼືສົ່ງຕໍ່ໄປເພື່ອເປັນບັນທຶກຂອງພວກເຮົາໄດ້ບໍ? ກະລຸນາສົ່ງຂໍ້ມູນຫາ ແລະ/ຫຼືສົ່ງສຳເນົາຫາ VRGmonitor@globalwitness.org ຢູ່ໃນທຸກການສື່ສານ.*

- *ອົງການຈັດຕັ້ງ, ເຄືອຂ່າຍ ແລະ/ຫຼືຊຸມຊົນທ້ອງຖິ່ນສາມາດບັນທຶກສິ່ງທີ່ເກີດຂຶ້ນໄດ້ບໍ່ຫຼັງຈາກນັ້ນ - ທ່ານໄດ້ໃບຮັບພ້ອມມີເລກທີອ້າງອີງບໍ? ທ່ານໄດ້ຮັບການຕອບຈາກ VRG ພາຍໃນໄລຍະເວລາ 30 ວັນທີ່ຕົກລົງກັນໄວ້ບໍ? ຖ້າໄດ້ຮັບ, ເຂົາເຈົ້າຕອບວ່າແນວໃດ? ອົງການຈັດຕັ້ງ ຫຼືເຄືອຂ່າຍຂອງທ່ານສາມາດໃຫ້ຄຳເຫັນຕຳນິຕິຊົມກ່ຽວກັບການຕອບຈາກ VRG ບໍ?*
- *ອົງການຈັດຕັ້ງ, ເຄືອຂ່າຍ ແລະ/ຫຼືຊຸມຊົນທ້ອງຖິ່ນຂອງທ່ານສາມາດໃຫ້ລາຍລະອຽດກ່ຽວກັບສິ່ງທີ່ໄດ້ຮັບການພິຈາລະນາດຳເນີນແກ້ໄຂບໍ, ເກີດອັນໃດຂຶ້ນແທ້?*
- *ອົງການຈັດຕັ້ງ, ເຄືອຂ່າຍ ແລະ/ຫຼືຊຸມຊົນທ້ອງຖິ່ນຂອງທ່ານສາມາດໃຫ້ຄຳສະເໜີແນະນຳທົ່ວໄປແກ່ Global Witness (ແລະໄປຫາ VRG ໂດຍກົງ ຖ້າເຂົາເຈົ້າຕ້ອງການ) ກ່ຽວກັບວ່າຈະສາມາດປັບປຸງກົນໄກໄດ້ແນວໃດບໍ*

Global Witness ຈະເຮັດກັບຂໍ້ມູນນີ້ດັ່ງຕໍ່ໄປນີ້ ເພື່ອໃຫ້ຄຳຕຳນິຕິຊົມແກ່ VRG ເປັນປົກກະຕິຄື:

ກ. ຮັກສາບັນທຶກທຸກເຫດການທີ່ການເປີດໂຕ ແລະການເປີດເຜີຍກົນໄກບໍ່ໄດ້ເປັນໄປຕາມທີ່ຕົກລົງຢູ່ໃນຄຳສັ່ງ.

ຂ. ສ້າງ ແລະຮັກສາຖານຂໍ້ມູນຂອງແຕ່ລະກໍລະນີຂອງອົງການຈັດຕັ້ງ, ເຄືອຂ່າຍ ແລະ/ຫຼືຊຸມຊົນທ້ອງຖິ່ນທີ່ພະຍາຍາມໃຊ້ກົນໄກ, ລວມທັງ: ການບັນທຶກຊື່ຂອງການສຳປະທານທີ່ໜ້າສົງໄສ; ວັນທີ; ລາຍລະອຽດກ່ຽວກັບຜູ້ສົ່ງຄຳສະເໜີ; VRG ບັນລຸໄດ້ຕາມຂັ້ນຕອນໃດ (ຫຼືບໍ່ບັນລຸ); ຜົນໄດ້ຮັບ, ອື່ນໆ.

ຄ. ປ້ອນຂໍ້ມູນນີ້ກັບຄືນໃຫ້ VRG ເປັນປົກກະຕິຢູ່ໃນບົດລາຍງານ ແລະລາຍງານດ້ວຍຕົນເອງ, ແລະຕິດຕາມຄືນກ່ຽວກັບການປ່ຽນແປງຕ່າງໆທີ່ໄດ້ແນະນຳໃຫ້ກັບກົນໄກຫຼັງຈາກນັ້ນ.

**ເຮັດແນວໃດຕໍ່ໄປ?**

**ທ່ານບອກໃຫ້ພວກເຮົາຮູ້ໄດ້ບໍວ່າ ທ່ານສົນໃຈເຂົ້າຮ່ວມໃນກົນໄກ ແລະຊ່ວຍພວກເຮົາຕິດຕາມ VRG ບໍ? ຫຼືຖ້າທ່ານມີຄຳຖາມ ຫຼືຄຳແນະນຳເພີ່ມເຕີມກ່ຽວກັບວ່າ ກົນໄກ, ຫຼືລະບົບການຕິດຕາມຂອງພວກເຮົາຈະສາມາດປັບປຸງໄດ້ແນວໃດ?**

ພວກເຮົາຍິນດີໃຫ້ການສົນທະນາເລື່ອງນີ້ໂດຍທາງອີເມວ ຫຼືທາງ Skype. ພວກເຮົາຍັງຈະໄປຢ້ຽມຢາມກຳປູເຈຍ ແລະ ສປປ ລາວ ໃນບໍ່ດົນນີ້ ແລະຍິນດີພົບດ້ວຍຕົນເອງ ເພື່ອປຶກສາຫາລືລາຍລະອຽດເພີ່ມເຕີມກັບທ່ານ.

ຂໍຂອບໃຈ

ມີການ ແລະ ໂຈຊີ (Megan and Josie)

ພິເສດ:  ສໍາລັບທ່ານຜູ້ຢູ່ທີ່ ສປປ ລາວ, VRG ຍັງເປັນຜູ້ຖືຫຸ້ນຢູ່ໃນການສໍາປະທານປູກຢາງຕໍ່ໄປນີ້: ກຸ່ມບໍລິສັດປູກຢາງ ລາວ-ຫວຽດ ເດົາຕຽງ (Dau Tieng) (ບາຈຽງ, ຊະນະສົມບູນ, ແຂວງຈໍາປາສັກ, ແລະເລົາງາມ, ແຂວງສາລະວັນ); JS ຢາງ SGS (ເມືອງນອງ, ແຂວງສະຫວັນນະເຂດ); JSC ຢາງໂຮຈິມິນ / ບໍລິສັດຊາວໜຸ່ມໂຮຈິມິນ (ແຂວງຈໍາປາສັກ); ແລະບໍລິສັດດັກລັກ (ແຂວງຈໍາປາສັກ, ສາລະວັນ ແລະອັດຕະປື). ໃນເວລານີ້, ເຈົ້າໜ້າທີ່ອາວຸໂສຂອງ VRG ໄດ້ບອກກັບພວກເຮົາວ່າ ຄໍາສັ່ງນີ້ ແລະກົນໄກບໍ່ນໍາໃຊ້ກັບການສໍາປະທານເຫຼົ່ານີ້. ພວກເຮົາບໍ່ເຫັນດີ ແລະຫວັງວ່າຈະສາມາດເຮັດໃຫ້ເຂົາເຈົ້າໝັ້ນໃຈ ເພື່ອເອົາສີ່ພື້ນທີ່ເພີ່ມເຕີມເຫຼົ່ານີ້ເຂົ້ານໍາໃນອະນາຄົດ. ດັ່ງນັ້ນ, ຖ້າທ່ານມີຂໍ້ມູນຈາກຊຸມຊົນທີ່ປະສົບກັບບັນຫາເນື່ອງຈາກຜົນຂອງການປູກຕົ້ນໄມ້ເຫຼົ່ານີ້ຢູ່ໃນພື້ນທີ່, ກະລຸນາຢ່າລັງເລທີ່ຈະສົ່ງມັນໃຫ້ກັບພວກເຮົາ, ແລະພວກເຮົາຈະສົ່ງມັນໄປໃຫ້ກັບ VRG.